# ດຳລັດ ວ່າດ້ວຍຜະລິດຕະພັນອາຫານ ແລະ ອຸປະກອນ ກ່ຽວກັບອາຫານສຳລັບ ເດັກອ່ອນ ແລະ ເດັກນ້ອຍ



ລັດຖະບານແຫ່ງ ສປປ ລາວ ແມ່ນໄດ້ຮັບຮອງເອົາດຳລັດ ວ່າດ້ວຍຜະລິດຕະພັນອາຫານ ແລະ ອຸປະກອນ ກ່ຽວກັບອາຫານສຳລັບ ເດັກອ່ອນ ແລະ ເດັກນ້ອຍ (BMS Decree) ເພື່ອປົກປ້ອງ, ສົ່ງເສີມ ແລະ ສະໜັບສະໜູນ ການລ້ຽງລູກດ້ວຍນ້ຳນົມແມ່ພາຍໃນປະເທດ. ໂດຍສະເພາະປະເພດຜະລິດຕະພັນນົມຜົງ ແລະ ອາຫານເສີມຂອງເດັກອ່ອນ ແລະ ເດັກນ້ອຍ ອາຍຸ 0-36 ເດືອນ.



ການມີດຳລັດ ທີ່ເຂັ້ມງວດດ້ານການຄວບຄຸມການຕະຫຼາດ ຂອງນົມຜົງ ແລະ ຜະລິດຕະພັນອາຫານເສີມທົດແທນ ນ້ຳນົມແມ່ ແມ່ນມີຄວາມຈຳເປັນໃນການຊ່ວຍປົກປ້ອງແມ່ ແລະ ຜູ້ດູແລເດັກ ຈາກການໂຄສະນາ ແລະ ການຂາຍແບບຜິດຈັນຍາບັນ ທີ່ເນັ້ນ ດ້ານໂຄສະນາຊັບພະຄຸນ ແລະ ປະໂຫຍດເກີນຈິງຂອງນົມຜົງ ແລະ ເຮັດໃຫ້ການລ້ຽງລູກດ້ວຍນ້ຳນົມແມ່ ແລະ ການພັດທະນາດ້ານສຸຂະພາບ ແລະ ພັດທະນາການຂອງເດັກຫຼຸດລົງ.



ການໂຄສະນາ ແລະ ສົ່ງເສີມການຕະຫຼາດທຸກຮູບແບບຂອງຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບ ເດັກອ່ອນ ແລະ ເດັກນ້ອຍ ແມ່ນຖືກຫ້າມ ເພື່ອປົກປ້ອງການລ້ຽງລູກດ້ວຍນ້ຳນົມແມ່ ແລະ ສົ່ງເສີມ ການໄດ້ຮັບອາຫານທີ່ດີ ແລະ ມີໂພຊະນາການຂອງ ເດັກອ່ອນ ແລະ ເດັກນ້ອຍ.



ພະນັກງານສາທາລະນະສຸກ ແມ່ນມີບົດບາດສຳຄັນໃນການສົ່ງເສີມໃຫ້ເດັກອ່ອນ ແລະ ເດັກນ້ອຍ ໄດ້ຮັບນ້ຳນົມແມ່ ແລະ ໂພຊະນາການທີ່ດີ. ບໍ່ໃຫ້ແນະນຳຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບ ເດັກອ່ອນ ແລະ ເດັກນ້ອຍໃຫ້ແກ່ແມ່ ແລະ ຜູ້ດູແລ ເດັກອ່ອນ ແລະ ເດັກນ້ອຍ.



ການໂຄສະນາຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບ ເດັກອ່ອນ ແລະ ເດັກນ້ອຍ ຜ່ານພະນັກງານແພດໝໍຢູ່ສະຖານທີ່ບໍລິການສຸຂະພາບ ຫຼື ນອກສະຖານທີ່ ຈາກບໍລິສັດນົມຜົງ ລວມທັງສື່ອອນລາຍ ຖືວ່າເປັນການລະເມີດດຳລັດ ແລະ ຍັງມີຜົນກະທົບທາງລົບຕໍ່ກັບການລ້ຽງລູກດ້ວຍນ້ຳນົມແມ່ ແລະ ເປັນການໃຫ້ຂໍ້ມູນທາງເລືອກທີ່ຜິດສຳລັບແມ່ ແລະ ຜູ້ດູແລ ເດັກອ່ອນ ແລະ ເດັກນ້ອຍ.

ສະຫະພາບ ເອີຣົບ
European Union

unicef
ເພື່ອເດັກທຸກໆຄົນ

LUXEMBOURG
AID & DEVELOPMENT

care